ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************00**************

ອົງການໄອຍະການປະຊາຊົນສູງສຸດ — **ເລກທີ 893 /ອອປສ**

ນະຄອນຫຼວງວຽງຈັນ, ວັນທີ **25 ກັນຍາ 2013**

# ຂໍ້ຕົກລົງ

# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

# ວ່າດ້ວຍ ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ

**ອີງຕາມ** ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ ສະບັບເລກທີ 10/ສພຊລົງ ວັນທີ 26 ພະຈິກ 2009.

**ອີງຕາມ** ມະຕິຕົກລົງ ຂອງສະພາແຫ່ງຊາດ ວ່າດ້ວຍການເລືອກຕັ້ງຫົວໜ້າອົງ ການ ໄອຍະການປະຊາຊົນສູງສຸດສະບັບເລກທີ 09/ສພຊ, ລົງວັນທີ 16 ມີນາ 2011.

**ອີງຕາມ** ດຳລັດຂອງລັດຖະບານສະບັບເລກທີ 461/ລບ, ລົງວັນທີ 09 ຕຸລາ 2012 ວ່າດ້ວຍມາດຕະຖານຕຳແໜ່ງບໍລິຫານຂອງລັດຖະກອນແຫ່ງ ສປປລາວ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ອອກຂໍ້ຕົກລົງ**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1** **ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການແຕ່ງຕັ້ງ, ການເຄື່ອນໄຫວ ຂອງພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ ເພື່ອເຮັດໃຫ້ການຄຸ້ມຄອງ, ບໍາລຸງ-ກໍ່ສ້າງພັດທະນາ ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍໃຫ້ເປັນລະບົບ, ມີຄຸນນະພາບ ແລະ ສືບທອດຢ່າງຕໍ່ເນື່ອງ.

**ມາດຕາ 2 ພະນັກງານໄອຍະການປະຊາຊົນ**

ພະນັກງານໄອຍະການປະຊາຊົນແມ່ນພະນັກງານທີ່ໄດ້ຮັບການແຕ່ງຕັ້ງຈາກຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃຫ້ປະຕິບັດໜ້າທີ່ຕິດຕາມກວດກາ, ສອບສວນ ແລະ ເຂົ້າຮ່ວມປະຊຸມສານ.

**ພະນັກງານໄອຍະການປະຊາຊົນມີ ສາມຂັ້ນດັ່ງນີ້:**

- ພະນັກງານໄອຍະການປະຊາຊົນ ຂັ້ນ 1;
- ພະນັກງານໄອຍະການປະຊາຊົນ ຂັ້ນ 2;
- ພະນັກງານໄອຍະການປະຊາຊົນ ຂັ້ນ 3.

**ມາດຕາ 3 ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ**

ຜູ້ຊ່ວຍພະນັກງານໄອຍະການປະຊາຊົນແມ່ນພະນັກງານທີ່ໄດ້ຮັບການແຕ່ງຕັ້ງຈາກຫົວໜ້າອົງການໄອຍະການປະຊາຊົນສູງສຸດໃຫ້ປະຕິບັດວຽກງານຊ່ວຍພະນັກງານໄອຍະການປະຊາຊົນ.

## ໝວດທີ II
## ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ
## ຂອງພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ



**ມາດຕາ 4 ສິດ ແລະ ໜ້າທີ່ຂອງພະນັກງານໄອຍະການປະຊາຊົນ**

ພະນັກງານໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້:

1. ດໍາເນີນການສືບສວນ-ສອບສວນ ຄະດີ;
2. ເອົາຄໍາໃຫ້ການຂອງໂຈດ, ຈໍາເລີຍ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດໍາເນີນຄະດີ;
3. ເກັບກໍາຂໍ້ມູນຫຼັກຖານກ່ຽວກັບຄະດີ;
4. ເຂົ້າຮ່ວມການດໍາເນີນຄະດີກັບເຈົ້າໜ້າທີ່ສືບສວນ-ສອບສວນ;
5. ຄົ້ນຄວ້າ, ສະຫຼຸບສໍານວນຄະດີ, ຮ່າງຄໍາຖະແຫຼງ ຫຼື ຄໍາຕົກລົງ ຂອງຫົວໜ້າອົງການໄອຍະການປະຊາຊົນ;
6. ເຂົ້າຮ່ວມປະຊຸມສານອາຍາ, ແພ່ງ, ການຄ້າ, ຄອບຄົວ ແລະ ເດັກ;
7. ຕິດຕາມກວດກາການປະຕິບັດ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ແລະ ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;
8. ຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ;
9. ໄດ້ຮັບການບໍາລຸງ ແລະ ຍົກລະດັບ ກ່ຽວກັບວຽກງານໄອຍະການ;
10. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຫົວໜ້າອົງການໄອຍະການປະຊາຊົນ;
11. ໄດ້ຮັບເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍ;
12. ໄດ້ຮັບບັດປະຈໍາການ ເພື່ອນໍາໃຊ້ຢັ້ງຢືນໃນເວລາປະຕິບັດໜ້າທີ່;
13. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມ ທີ່ກົດໝາຍໄດ້ກໍານົດໄວ້.

ມາດຕາ 5 ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການປະຊາຊົນ

ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຂົ້າຮ່ວມ ແລະ ບັນທຶກເອົາຄຳໃຫ້ການ;
2. ຊ່ວຍຄົ້ນຄວ້າ, ສະຫຼຸບສຳນວນຄະດີ ແລະ ຮ່າງຄຳຖະແຫຼງ ຂອງຫົວໜ້າອົງການໄອຍະການປະຊາຊົນ;
3. ໃສ່ເລກທີຄະດີ, ຈັດສຳນວນຄະດີ, ເຮັດບັນຊີເອກະສານ, ເກັບມ້ຽນ ແລະ ເຮັດສະຖິຕິສຳນວນຄະດີ;
4. ເຮັດບັນຊີ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;
5. ເຮັດບັນຊີ ແລະ ເກັບກຳສະຖິຕິ ຜູ້ຖືກຫາ ແລະ ນັກໂທດ;
6. ເຮັດໝາຍຮຽກ, ໝາຍເຊີນ;
7. ໄດ້ຮັບການບຳລຸງ ແລະ ຍົກລະດັບ ກ່ຽວກັບວຽກງານໄອຍະການ;
8. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ພະນັກງານໄອຍະການປະຊາຊົນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 6 ຄວາມຮັບຜິດຊອບ

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍມີຄວາມຮັບຜິດຊອບດັ່ງນີ້:

1. ມີຄວາມຮັບຜິດຊອບຕໍ່ລັດຖະທຳມະນູນ ແລະ ກົດໝາຍ;
2. ມີຄວາມຮັບຜິດຊອບ ຕໍ່ສິດ ແລະ ໜ້າທີ່ທີ່ໄດ້ຮັບການມອບໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ແລະ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;
3. ມີຄວາມຮັບຜິດຊອບ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ.



# ໝວດທີ III

## ມາດຕະຖານຂອງພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ

ມາດຕາ 7 ມາດຕະຖານຂອງພະນັກງານໄອຍະການປະຊາຊົນຂັ້ນ 1

ພະນັກງານໄອຍະການປະຊາຊົນຂັ້ນ 1 ມີມາດຕະຖານດັ່ງນີ້:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ບໍລິສຸດຕໍ່ການປະຕິບັດໜ້າທີ່ຂອງຕົນ, ມີລະດັບຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງຈົບຊັ້ນສູງຂຶ້ນໄປ;
2. ມີຄວາມຮູ້ທາງດ້ານກົດໝາຍ ຈົບຊັ້ນສູງຂຶ້ນໄປ;
3. ມີຄວາມສຳນານ ແລະ ມີຫົວຄິດປະດິດສ້າງ ໃນການປະຕິບັດສິດ-ໜ້າທີ່ໃນການຕິດຕາມກວດກາການປະຕິບັດກົດໝາຍ;
4. ສາມາດໃຫ້ຄຳແນະນຳວຽກງານວິຊາການກົດໝາຍ, ສະຫຼຸບ, ຕີລາຄາຂໍ້ມູນຫຼັກຖານກ່ຽວກັບຄະດີ, ລາຍງານ ແລະ ໃຫ້ຄຳເຫັນທາງດ້ານວິຊາການກົດໝາຍໄດ້ດີ, ມີລະບອບແບບແຜນວິທີເຮັດວຽກທີ່ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ;
5. ເປັນພະນັກງານໄອຍະການປະຊາຊົນຂັ້ນ 2 ຫຼື ດຳລົງຕຳແໜ່ງບໍລິຫານປະເພດ 3 ມາແລ້ວ 5 ປີຂຶ້ນໄປ; ສຳລັບຜູ້ທີ່ບໍ່ເຄີຍດຳລົງຕຳແໜ່ງບໍລິຫານປະເພດ 3 ມາກ່ອນ ແຕ່ຖືກແຕ່ງຕັ້ງມາດຳລົງຕຳແໜ່ງບໍລິຫານປະເພດ 2 ທີ່ຊີ້ນຳວຽກງານວິຊາການນັ້ນ ຕ້ອງມີອາຍຸການໃນຕຳແໜ່ງບໍລິຫານປະເພດ 2 ເປັນເວລາ 5 ປີ ຂຶ້ນໄປ;
6. ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງ ແລະ ສາມາດນຳໃຊ້ຄອມພິວເຕີໄດ້ ( ຍົກເວັ້ນຜູ້ທີ່ມີອາຍຸ ແຕ່ 50 ປີ ຂຶ້ນໄປ );
7. ມີສຸຂະພາບແຂງແຮງດີ.

## ມາດຕາ 8 ມາດຕະຖານພະນັກງານໄອຍະການປະຊາຊົນ ຂັ້ນ 2

ພະນັກງານໄອຍະການປະຊາຊົນ ຂັ້ນ 2 ມີມາດຕະຖານດັ່ງນີ້:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ບໍລິສຸດຕໍ່ການປະຕິບັດໜ້າທີ່ຂອງຕົນ, ມີລະດັບຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ຈົບຊັ້ນສູງຂຶ້ນໄປ;
2. ມີຄວາມຮູ້ທາງດ້ານກົດໝາຍ ຈົບຊັ້ນສູງຂຶ້ນໄປ;
3. ມີຄວາມສາມາດປະຕິບັດສິດ-ໜ້າທີ່ ໃນການຕິດຕາມກວດກາການປະຕິບັດກົດໝາຍ;
4. ສາມາດໃຫ້ຄຳແນະນຳວຽກງານວິຊາການກົດໝາຍ, ສະຫຼຸບ, ຕີລາຄາຂໍ້ມູນຫຼັກຖານ ກ່ຽວກັບຄະດີ, ລາຍງານ ແລະ ໃຫ້ຄຳເຫັນດ້ານວິຊາການກົດໝາຍ ໄດ້ດີ;
5. ເປັນພະນັກງານໄອຍະການປະຊາຊົນ ຂັ້ນ 3 ຫຼື ດຳລົງຕຳແໜ່ງບໍລິຫານປະເພດ 4 ມາແລ້ວ 5 ປີຂຶ້ນໄປ, ສາລັບຜູ້ທີ່ບໍ່ໄດ້ຜ່ານຕາແໜ່ງບໍລິຫາປະເພດ 4 ມາກ່ອນ ແຕ່ຖືກແຕ່ງຕັ້ງມາດຳລົງຕຳແໜ່ງບໍລິຫານປະເພດ 3 ຕ້ອງມີອາຍຸການໃນຕຳແໜ່ງບໍລິຫານປະເພດ 3 ເປັນເວລາ 5 ປີ ຂຶ້ນໄປ;
6. ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງ ແລະ ສາມາດນຳໃຊ້ຄອມພິວເຕີໄດ້ (ຍົກເວັ້ນຜູ້ທີ່ມີອາຍຸແຕ່ 50 ປີຂຶ້ນໄປ);
7. ມີສຸຂະພາບແຂງແຮງດີ.

## ມາດຕາ 9 ມາດຕະຖານພະນັກງານໄອຍະການປະຊາຊົນ ຂັ້ນ 3

ພະນັກງານໄອຍະການປະຊາຊົນ ຂັ້ນ 3 ມີມາດຕະຖານ ດັ່ງນີ້:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົດບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ ບໍລິສຸດ ຕໍ່ການປະຕິບັດໜ້າທີ່ຂອງຕົນ, ໄດ້ຜ່ານການຝຶກອົບຮົມ



2. ທິດສະດີການເມືອງ-ການປົກຄອງລະບົບບຳລຸງ 45 ວັນ ຂຶ້ນໄປ ແລະ ເປັນສະ ມາຊິກພັກສົມບູນ;
3. ມີຄວາມຮູ້ທາງດ້ານກົດໝາຍ ຈົບຊັ້ນສູງ ຂຶ້ນໄປ;
4. ສາມາດປະຕິບັດສິດ-ໜ້າທີ່ໃນການຕິດຕາມກວດກາການປະຕິບັດກົດໝາຍ ໄດ້ດີ;
5. ສາມາດໃຫ້ຄຳແນະນຳວຽກງານວິຊາການກົດໝາຍ, ສະຫຼຸບ, ຕີລາຄາຂໍ້ມູນຫຼັກຖານກ່ຽວກັບຄະດີ, ລາຍງານ ແລະໃຫ້ຄຳຊີ້ແຈງທາງດ້ານວິຊາກົດໝາຍ ໄດ້ດີ;
6. ເປັນຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ຫຼື ດຳລົງຕຳແໜ່ງບໍລິຫານປະ ເພດ 5 ໃນຂົງເຂດວຽກງານວິຊາການກົດໝາຍ ມາແລ້ວ 4 ປີ ຂຶ້ນໄປ;
7. ຮູ້ພາສາຕ່າງປະເທດໃດໜຶ່ງ ແລະ ສາມາດນຳໃຊ້ຄອມພິວເຕີໄດ້ (ຍົກເວັ້ນຜູ້ທີ່ມີອາຍຸ 50 ປີຂຶ້ນໄປ);
8. ມີສຸຂະພາບແຂງແຮງດີ.

ສາລັບຢູ່ອົງການໄອຍະການປະຊາຊົນເຂດຂອງແຂວງທີ່ຢູ່ເຂດຫ່າງໄກສອກຫຼີກນັ້ນ ຜູ້ທີ່ເປັນຜູ້ຊ່ວຍພະນັກງານໄອຍະການມາເປັນເວລາ 3 ປີ, ບໍ່ມີຄວາມຮູ້ດ້ານພາສາຕ່າງປະເທດ ແລະ ມີອາຍຸແຕ່ 50 ປີ ຂຶ້ນໄປ ກໍມີເງື່ອນໄຂສະເໜີຄັດເລືອກ ເຂົ້າເປັນພະນັກງານໄອຍະການປະຊາຊົນຂັ້ນ 3 ໄດ້.

## ມາດຕາ 10 ມາດຕະຖານ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ

ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີມາດຕະຖານ ດັ່ງນີ້:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ບໍລິສຸດຕໍ່ການປະຕິບັດໜ້າທີ່ ຂອງຕົນ, ໄດ້ຜ່ານການຝຶກອົບຮົມທິດສະດີລະບົບບຳລຸງ 45 ວັນ ຂຶ້ນໄປ ແລະເປັນສະມາຊິກພັກສຳຮອງ ຫຼື ສົມບູນ;

2. ມີຄວາມຮູ້ທາງດ້ານກົດໝາຍ ລະດັບຊັ້ນສູງຂຶ້ນໄປ;
3. ສາມາດປະຕິບັດວຽກງານວິຊາການກົດໝາຍ ຕາມຄຳແນະນຳ ຂອງພະນັກ ງານໄອຍະການປະຊາຊົນ, ກະກຽມເອກະສານ,ສະຫຼຸບສັງລວມ, ຕີລາຄາ ແລະ ລົງຄຳເຫັນ ໃຫ້ທັດສະນະໃນການແກ້ໄຂຄະດີຕໍ່ພະນັກງານໄອຍະການປະຊາຊົນ ຜູ່ທີ່ມອບໝາຍວຽກງານໃຫ້;
4. ເຮັດວຽກວິຊາການກົດໝາຍຢ່າງຕໍ່ເນື່ອງ 3 ປີ ຂຶ້ນໄປນັບແຕ່ມື້ເປັນລັດຖະກອນສົມບູນ;
5. ໄດ້ຜ່ານຫຼັກສູດການຝຶກອົບຮົມວຽກງານໄອຍະການປະຊາຊົນຢູ່ ພາຍໃນ ຫຼື ຕ່າງປະເທດ;
6. ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງ ແລະ ສາມາດນຳໃຊ້ຄອມພິວເຕີ;
7. ມີສຸຂະພາບແຂງແຮງດີ;

## ໝວດທີ IV
## ການຄັດເລືອກ, ເລື່ອນຂັ້ນ, ທຽບຂັ້ນ, ແຕ່ງຕັ້ງ ແລະ ຍົກຍ້າຍ ພະນັກງານໄອຍະການປະຊາຊົນ ແລະ ຜູ່ຊ່ວຍ

### ມາດຕາ 11 ການຄັດເລືອກ

ການຄັດເລືອກ ແມ່ນການເລືອກເຟັ້ນພະນັກງານວິຊາການກົດໝາຍ, ຜູ່ຊ່ວຍພະນັກງານໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ທີ່ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7, 8, 9, ແລະ 10 ຂອງຂໍ້ຕົກລົງສະບັບນີ້ເພື່ອນຳສະເໜີຫົວໜ້າອົງການໄອຍະການປະຊາຊົນສູງສຸດອະນຸມັດ ແຕ່ງຕັ້ງ.



ການຄັດເລືອກພະນັກງານໄອຍະການປະຊາຊົນ ແລະ ຜູ່ຊ່ວຍ ຢູ່ຂັ້ນສູນກາງ ແມ່ນກົມຈັດຕັ້ງ-ພະນັກງານ ເປັນຜູ່ຄົ້ນຄວ້ານຳສະເໜີຕໍ່ຄະນະກຳມະການໄອຍະການປະຊາຊົນ ພິຈາລະນາ ແລ້ວສະເໜີ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດອະນຸມັດແຕ່ງຕັ້ງ.

ການຄັດເລືອກພະນັກງານໄອຍະການປະຊາຊົນ ແລະ ຜູ່ຊ່ວຍ ຢູ່ຂັ້ນທ້ອງຖິ່ນ ແມ່ນຄະນະກຳມະການຄັດເລືອກ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນເປັນຜູ່ຄັດເລືອກໂດຍເປັນເອກະພາບກັບຄະນະພັກ-ອົງການປົກຄອງທ້ອງຖິ່ນຕາມລະບຽບການ ແລ້ວນຳສະເໜີຕໍ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ອະນຸມັດແຕ່ງຕັ້ງ.

ການຄົ້ນຄວ້າຄັດເລືອກພະນັກງານໄອຍະການປະຊາຊົນ ແລະ ຜູ່ຊ່ວຍ ແມ່ນດຳເນີນປີລະໜຶ່ງຄັ້ງໂດຍກຳນົດໃນງວດ IV ຂອງສົກງົບປະມານແຕ່ລະປີ.

### ມາດຕາ 12 ການເລື່ອນຂັ້ນ

ການເລື່ອນຂັ້ນ ແມ່ນການເລື່ອນຕຳແໜ່ງຜູ່ຊ່ວຍ ແລະ ພະນັກງານໄອຍະການປະຊາຊົນ ຈາກຂັ້ນເກົ່າໄປຫາຂັ້ນໃໝ່ທີ່ສູງກວ່າ ໂດຍການຕົກລົງຂອງຫົວໜ້າອົງ ການໄອຍະການປະຊາຊົນສູງສຸດ.

ລະບຽບການຄົ້ນຄວ້າເລື່ອນຂັ້ນ ແມ່ນປະຕິບັດຕາມ ມາດຕາ 11 ຂອງຂໍ້ຕົກ ລົງສະບັບນີ້.

### ມາດຕາ 13 ການທຽບຂັ້ນ

ການທຽບຂັ້ນ ແມ່ນການທຽບຕຳແໜ່ງບໍລິຫານ ແລະ ຕຳແໜ່ງວິຊາການກົດໝາຍ ຢູ່ອົງການໄອຍະການປະຊາຊົນ ແລະ ໃຫ້ປະຕິບັດປະຕິບັດດັ່ງນີ້:

1. ຕຳແໜ່ງບໍລິຫານ ປະເພດ 2 ທຽບຕຳແໜ່ງພະນັກງານໄອຍະການປະຊາ ຊົນ ຂັ້ນ 1;

**ມາດຕາ 18 ນະໂຍບາຍ**

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ ຈະໄດ້ຮັບນະໂຍບາຍຈາກຜົນສຳເລັດ ຂອງການປະຕິບັດໜ້າທີ່ວຽກງານຂອງຕົນ ດັ່ງນີ້:

1. ໄດ້ຮັບການເລື່ອນຂັ້ນ ແລະ ປະດັບຂັ້ນ ຕາມລະບຽບການ;
2. ໄດ້ຮັບເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 19 ການຍ້ອງຍໍ**

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ ຜູ້ທີ່ມີຜົນງານດີເດັ່ນ ໃນການປະຕິບັດໜ້າທີ່ວຽກງານ ນອກຈາກຈະໄດ້ຮັບນະໂຍບາຍ ຕາມມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງໄດ້ຮັບການຍ້ອງຍໍດັ່ງນີ້:

1. ລາງວັນ;
2. ໃບຊົມເຊີຍ;
3. ໃບຍ້ອງຍໍ;
4. ຫຼຽນກາ;
5. ຫຼຽນໄຊ;
6. ນາມມະຍົດອື່ນໆ.

**ມາດຕາ 20 ການປະຕິບັດວິໄນ**

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ ທີ່ລະເມີດຂໍ້ຫ້າມ ຕາມຂໍ້ຕົກລົງສະບັບນີ້ ຫຼື ຂໍ້ຫ້າມຂອງລະບຽບລັດຖະກອນ ຫຼື ລະເມີດກົດໝາຍແມ່ນຈະຖືກປະຕິບັດວິໄນທາງບໍລິຫານ ທີ່ກຳນົດໄວ້ໃນ ລະບຽບລັດຖະກອນ ຫຼື ຖືກລົງໂທດ ຕາມກົດໝາຍ ໂດຍອີງຕາມຄວາມຜິດສະຖານໜັກ ຫຼື ເບົາ ຕາມການ ຄົ້ນຄວ້າຂອງຄະນະກຳມະການໄອຍະການປະຊາຊົນ.

**ມາດຕະການທາງວິໄນ ມີດັ່ງນີ້:**

1. ຕິຕຽນ;
2. ກ່າວເຕືອນຄວາມຜິດໂດຍຂຽນໃບສຳຫຼວດຕົນເອງ, ແລ້ວບັນທຶກໄວ້ໃນສຳເນົາຊີວະປະຫວັດລັດຖະກອນ;
3. ໂຈະການເລື່ອນຂັ້ນພະນັກງານໄອຍະການປະຊາຊົນ ໂດຍການຕົກລົງຂອງຄະນະກຳມະການໄອຍະການປະຊາຊົນ;
4. ປົດຂັ້ນພະນັກງານໄອຍະການໃດໜຶ່ງ ຫຼື ທັງໝົດ ຕາມຄວາມເໝາະສົມ;
5. ລົບຊື່ອອກຈາກການເປັນລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 21 ການສິ້ນສຸດ**

ການສິ້ນສຸດການເປັນພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍ ໃນກໍລະນີດັ່ງນີ້:

1. ເສັຍຊີວິດ;
2. ອອກພັກຜ່ອນຮັບເບັ້ຍບຳນານ ຫຼື ຂໍລາອອກຈາກລັດຖະກອນ ດ້ວຍຄວາມສະໝັກໃຈ;
3. ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ບໍ່ຢູ່ໃນລະບົບອົງການໄອຍະການປະຊາຊົນ;
4. ຖືກປົດຂັ້ນພະນັກງານໄອຍະການປະຊາຊົນ;
5. ຖືກໄລ່ອອກຍ້ອນມີຄວາມຜິດທາງວິໄນ;
6. ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ຖືກລົງໂທດຕັດອິດສະຫຼະພາບ ໃນກໍລະນີມີຄວາມຜິດໂດຍເຈດຕະນາ.

## ໝວດທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການບັນດາອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ເຂດ ພ້ອມກັນເຊື່ອມຊຶມ, ກຳແໜ້ນ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເປັນເອກະພາບ ແລະ ຖືກຕ້ອງ.

ກົມຈັດຕັ້ງ-ພະນັກງານເປັນເສນາທິການໂດຍກົງ, ໃນການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 198/ອອປສ, ລົງວັນທີ 24 ເມສາ 2009 ຂອງໄອຍະການປະຊາຊົນສູງສຸດ ວ່າດ້ວຍ ການຮັບຮອງເອົາການອະນຸມັດທຶນເງິນອຸດໜູນຕຳແໜ່ງຝ່າຍວິຊາການ ຂອງພະນັກງານສອບສວນ ແລະ ຜູ້ຊ່ວຍພະນັກງານສອບສວນ ຂອງອົງການໄອຍະການປະຊາຊົນແຕ່ລະຂັ້ນ ໃນຂອບເຂດທົ່ວປະເທດ.

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ອົງການໄອຍະການປະຊາຊົນສູງສຸດ

**ຄຳສານ ສຸວົງ**